**ບົດຄຳເຫັນ**

**ທ່ານ ນາງ ພອນວັນ ອຸທະວົງ**

**ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ**

**ພິທີພົບປະນັກຂ່າວ ກ່ຽວກັບການກະກຽມຈັດກອງປະຊຸມໂຕະມົນ ປະຈຳປີ 2023**

**ວັນທີ 7 ກຸມພາ 2024**

**ຮຽນ:**

- **ທ່ານ ບັກໂຄເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ**
- **ບັນດາທ່ານ ຫົວໜ້າກົມ, ຮອງຫົວໜ້າກົມ ຈາກບັນດາກະຊວງ ຂະແໜງການ**
- **ທ່ານ ຜູ້ຕາງໜ້າຈາກ ໜ່ວຍງານຂະແໜງການ (SWG)**
- **ບັນດາຜູ້ຕາງໜ້າຈາກສຳນັກຂ່າວ ແລະ ສື່ມວນຊົນ**
- **ບັນດາ ແຂກຜູ້ທີ່ມີກຽດ ທ່ານຍິງ ແລະ ທ່ານຊາຍ**

ໃນນາມຕາງໜ້າ ກະຊວງ ແຜນການ ແລະ ການລົງທຶນ, ຂ້າພະເຈົ້າມີຄວາມປິຕິຍິນດີ ແລະ ເປັນກຽດຢ່າງສູງທີ່ໄດ້ຮ່ວມກັບ **ທ່ານ ບັກໂຄເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ** ເຂົ້າຮ່ວມກອງປະຊຸມ ພົບປະນັກຂ່າວຄັ້ງນີ້ ເພື່ອແຈ້ງ ໃຫ້ນັກຂ່າວ, ສື່ມວນຊົນ ແລະ ພາກສ່ວນກ່ຽວຂ້ອງຊາບວ່າ: ອີງຕາມຄຳເຫັນ ຂອງຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ໂດຍມີພະນະທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເປັນປະທານ, ກອງປະຊຸມໂຕະມົນປະຈຳປີ 2023 ຈະໄດ້ຈັດຂຶ້ນ ໃນວັນທີ 13 ກຸມພາ 2024 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ.

ຂ້າພະເຈົ້າຂໍຖືໂອກາດນີ້ ເພື່ອແຈ້ງ ກ່ຽວກັບຄວາມເປັນມາຂອງຂະບວນການໂຕະມົນ ໃຫ້ບັນດາທ່ານນັກຂ່າວ ແລະ ສື່ມວນຊົນ ຊາບ ເນື່ອງຈາກວ່າບາງທ່ານ ອາດຈະຍັງບໍ່ຄຸ້ນເຄີຍກັບ ຂະບວນການໂຕະມົນ ແລະ ກອງປະຊຸມໂຕະມົນ ດັ່ງກ່າວ.

**ບັນດາທ່ານທີ່ນັບຖື,**

ຂະບວນການໂຕະມົນ ເປັນກົນໄກການປະສານງານ ກ່ຽວກັບການຊ່ວຍເຫຼືອທາງການເພື່ອການພັດທະນາ, ເຊິ່ງໄດ້ ສ້າງຕັ້ງຂຶ້ນ ແລະ ຈັດຕັ້ງປະຕິບັດເລີ່ມແຕ່ປີ 1983 ເປັນຕົ້ນມາ ແລະ ມີການຈັດກອງປະຊຸມໂຕະມົນ ທຸກໆ 03 ປີ ທີ່ ເມືອງເຊີແນວ ປະເທດສະວິດ. ຕໍ່ມາ, ກອງປະຊຸມດັ່ງກ່າວໄດ້ປ່ຽນມາຈັດຂຶ້ນ ຢູ່ ສປປ ລາວ ພາຍໃຕ້ການຊີ້ນໍາ-ນໍາພາ ຂອງລັດຖະບານແຫ່ງ ສປປ ລາວ ນັບແຕ່ປີ 1999 ເປັນຕົ້ນມາ. ໃນນີ້ ກອງປະຊຸມໂຕະມົນ (RTIM) ແມ່ນຈັດຂຶ້ນທຸກໆປີ ແລະ ກອງປະຊຸມໂຕະມົນລະດັບສູງ (HL-RTM) ແມ່ນຈັດຂຶ້ນ ທຸກໆ 05 ປີ ເຊິ່ງເປັນເວທີສະເພາະ ໃນການສົນທະນາ ກ່ຽວກັບນະໂຍບາຍເພື່ອສົ່ງເສີມການຮ່ວມມື, ການປະສານງານ ແລະ ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງລັດຖະບານ ແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ (DPs). ຂະບວນການໂຕະມົນ ຈະຊ່ວຍກະຕຸກຊຸກຍູ້ ການສົນທະນາທີ່ມີຄວາມສໍາຄັນ ກ່ຽວກັບວາລະການພັດທະນາຂອງປະເທດ ຄຽງຄູ່ກັນກັບ ການສ້າງປະສິດທິພາບໃຫ້ແກ່ການພັດທະນາ ແລະ ການປະສານງານວຽກງານການຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ພາຍໃນປະເທດ.

ມາຮອດປະຈຸບັນ, ຂະບວນການໂຕະມົນທີ່ຈັດຕັ້ງປະຕິບັດ ຢູ່ ສປປລາວ ໄດ້ດໍາເນີນມາເປັນເວລາ 25 ປີເຕັມແລ້ວ. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ພວກເຮົາເຫັນໄດ້ເຖິງການມີສ່ວນຮ່ວມຢ່າງຫ້າວຫັນຂອງທຸກພາກສ່ວນ ກໍຄື ບັນດາກະຊວງ ຂະແໜງການ ແລະ ອໍານາດການປົກຄອງຂັ້ນທ້ອງຖິ່ນ , ຄູ່ຮ່ວມພັດທະນາ ແລະພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ພາຍໃຕ້ຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການ ຂອງລັດຖະບານ ແຫ່ງ ສປປ ລາວ, ລວມທັງ ຄວາມພະຍາຍາມເພື່ອເຮັດໃຫ້ການປະສານງານ ທີ່ດີຂຶ້ນໃນທົ່ວປະເທດ.

ຜ່ານການປັບປຸງຂອດການປະສານງານ ແລະ ການຮ່ວມມືຜ່ານມາ, ເຫັນວ່າ ຂະບວນການໂຕະມົນໄດ້ຮັບໝາກຜົນເປັນຢ່າງດີໃນການປະກອບສ່ວນໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ, ການລຶບລ້າງຄວາມທຸກຍາກ ແລະ ຊຸກຍູ້ການພັດທະນາຊັບພະຍາກອນມະນຸດໃນໄລຍະຍາວ ຂອງ ສປປລາວ.

ສໍາລັບ 10 ໜ່ວຍງານຂະແໜງການ (SWGs) ທີ່ຢູ່ພາຍໃຕ້ ຂະບວນການໂຕະມົນ ກໍເປັນປັດໄຈໜຶ່ງທີ່ສໍາຄັນ ທີ່ຊ່ວຍສ້າງຄວາມເຊື່ອໝັ້ນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາຂອງພວກເຮົາ ແລະ ຊຸກຍູ້ການພັດທະນາໃນຫຼາຍ ຂະແໜງການ ທີ່ສໍາຄັນ. ປັດຈຸບັນ, ບັນດາຄູ່ຮ່ວມພັດທະນາ ມີບົດບາດອັນສໍາຄັນ ໃນການສະໜັບສະໜູນ ການປຶກສາຫາລືເພື່ອສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ກໍ່ຄືບູລິມະສິດ ຂອງຂະແໜງການ ແລະທ້ອງຖິ່ນ ໂດຍຜ່ານການເຂົ້າຮ່ວມໃນກອງປະຊຸມ ປຶກສາຫາລື ຂອງໜ່ວຍງານຂະແໜງການຕ່າງໆ.

ສໍາລັບກອງປະຊຸມໂຕະມົນໃນປີ 2023 ນີ້, ລັດຖະບານ ແຫ່ງ ສປປ ລາວ ຈະເຊື້ອເຊີນຜູ້ແທນກອງປະຊຸມເຂົ້າຮ່ວມ ຫຼາຍກວ່າ 300 ທ່ານ ເຊິ່ງໃນນັ້ນ ລວມມີອົງການຈັດຕັ້ງຂອງລັດຖະບານ ກໍຄືກະຊວງຂະແໜງການ ແລະ 17 ແຂວງ ແລະ ນະຄອນຫລວງ, ບັນດາປະເທດຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

**ບັນດາທ່ານ ແຂກຜູ້ມີກຽດ ທ່ານຍິງ ແລະ ທ່ານຊາຍ,**

ກອງປະຊຸມໂຕະມົນ ປະຈໍາປີ 2023 ນີ້ແມ່ນມີຄວາມສໍາຄັນຢ່າງຍິ່ງ, ເນື່ອງຈາກເປັນປີ ທີ່ພວກເຮົາກໍາລັງຢູ່ໃນໄລຍະກາງສະໃໝ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025); ຊຶ່ງມີລາຍລະອຽດດັ່ງຕໍ່ໄປນີ້:

- ປະຈຸບັນ ລັດຖະບານ ໄດ້ສຳເລັດ ການທົບທວນກາງສະໄໝ ຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ພາຍໃຕ້ ສະພາບ ທີ່ທ້າທາຍຫລາຍທີ່ສຸດ ເນື່ອງຈາກຜົນກະທົບຂອງ ການແຜ່ລະບາດພະຍາດ COVID-19, ສະພາບເສດຖະກິດໂລກທີ່ມີການຜັນແປງ ແລະ ສັບສົນ, ອັດຕາເງິນເຟີ້ ແລະຄ່າຄອງຊີບແພງ;

- ບົນພື້ນຖານ ທີ່ງົບປະມານມີຄວາມຈຳກັດ ແລະ ຄວາມຕ້ອງການດ້ານການພັດທະນາທີ່ ມີຈຳນວນຫຼວງຫຼາຍ, ດັ່ງທີ່ໄດ້ກຳນົດໄວ້ໃນວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມ ຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ພວກເຮົາກໍໄດ້ສູ້ຊົນຈັດຕັ້ງປະຕິບັດ ວຽກງານຍຸດທະ ສາດດ້ານການເງິນພາຍໃຕ້ ແຜນພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025);

- ລັດຖະບານ ສປປ ລາວໄດ້ສືບຕໍ່ເອົາໃຈໃສ່ການຈັດຕັ້ງຜັນຂະຫຍາຍບັນດາເປົ້າ ໝາຍຕ່າງໆ ຂອງການພັດທະນາແບບຍືນຍົງ (SDGs) ໂດຍສະເພາະ ການຈັດຕັ້ງປະຕິບັດເປົ້າໝາຍ 18 ຂອງ ສປປ ລາວ ກ່ຽວກັບລະເບີດບໍ່ທັນແຕກ ຍັງເປັນສິ່ງທ້າຍໃນການພັດທະນາປະເທດ ຊາດ. ປະຈຸບັນພວກເຮົາມີແຜນທີ່ຈະສົ່ງບົດລາຍງານແບບສະໝັກໃຈ ຄັ້ງທີສາມ (VNR3) ໃຫ້ອົງການສະຫະປະຊາຊາດ ໃນໄຕມາດ 3 ປີ 2024;

- ຄ່ຽງຄູ່ກັນນີ້, ການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ (LDC) ພາຍຫຼັງການປະເມີນຂອງ ສປປ ລາວ ໃນປີ 2021, ສປປ ລາວ ໄດ້ສະເໜີຂໍ ຂະຫຍາຍເວລາໃນການກະກຽມຫລຸດພົ້ນອອກຈາກປະເທດດ້ອຍພັດທະນາ ຕື່ມອີກ 2 ປີ ຈົນຮອດປີ 2026, ປະຈຸບັນ ລັດຖະບານ ໄດ້ຮັບຮອງ ຍຸດທະສາດ ຍຸດທະສາດການຂ້າມ

ຜ່ານອອກຈາກສະຖານະພາບ ປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ຂອງ ສປປ ລາວ (2022-2026 ແລະ ວິໄສທັດ 2030).

ດ້ວຍເຫດຜົນດັ່ງກ່າວ, ກອງປະຊຸມໂຕະມົນ ໃນປີນີ້ ຈຶ່ງເປັນໂອກາດທີ່ສຳຄັນ ຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ໃນການປຶກສາຫາລື ກ່ຽວກັບ ບູລິມະສິດ ຂອງ ການຈັດຕັ້ງປະຕິບັດ ແຜນພັດທະນເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ໂດຍສະເພາະແມ່ນ ປີ 2024 ແລະ 2025 ແມ່ນທ້າຍສະໄໝຂອງແຜນພັດທະນາດັ່ງກ່າວ, ການ ແລກປ່ຽນກ່ຽວກັບຄວາມຕ້ອງການ ໃນການເພີ່ມທະວີການຮ່ວມມື ທີ່ມີປະສິດທິຜົນຂອງການ ພັດທະນາໃນຊ່ວງໄລຍະເວລາຂອງການຟື້ນຟູ ເສດຖະກິດຂອງ ສປປ ລາວ.

ພ້ອມດຽວກັນນີ້, ຂ້າພະເຈົ້າ ຂໍແຈ້ງໃຫ້ທ່ານຊາບວ່າ ກອງປະຊຸມໂຕະມົນປະຈຳປີ 2023 ແມ່ນ ຈະໄດ້ປຶກສາຫາລື ກ່ຽວກັບຫົວຂໍ້ທີ່ສຳຄັນດັ່ງນີ້:

1. ບົດສະຫຼຸບການຈັດຕັ້ງປະຕິບັດກາງສະໄໝ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ຍຸດທະສາດການເງິນເພື່ອສະໜັບສະໜູນແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຂອບການຟື້ນຟູເສດຖະກິດຂອງ ສປປ ລາວ;
2. ບົດລາຍງານແຫ່ງຊາດແບບສະໝັກໃຈ ຄັ້ງທີ III ແລະ ແຜນຍຸດທະສາດການຂ້າມຜ່ານອອກ ຈາກສະຖານະພາບ ປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ຂອງ ສປປ ລາວ (2022-2026 ແລະ ວິໄສທັດ 2030) ແລະ ແຜນໃນຕໍ່ໜ້າ;
3. ນຳສະເໜີກ່ຽວກັບ ການຮ່ວມມືເພື່ອການພັດທະນາ (ການເຂົ້າຮ່ວມການຕິດຕາມປະສິດທິຜົນ ຂອງການຮ່ວມມືເພື່ອການພັດທະນາ ໃນລະດັບສາກົນ ຄັ້ງທີ 4 ແລະ ຄຳແນະນຳຂະບວນການ ໂຕະມົນ).

ນອກຈາກການນຳສະເໜີແລ້ວ ກອງປະຊຸມຂອງພວກເຮົາໃນມື້ນີ້ ຈະໄດ້ພ້ອມກັນປຶກ ສາຫາລື ໃນບັນເດັນທີ ສຳຄັນ 2 ຫົວຂໍ້ຄື:

(1) ສະພາບເສດຖະກິດ ແລະ ການເງິນ ແລະ ທິດທາງໃນຕໍ່ໜ້າເພື່ອຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ກອບຟື້ນຟູເສດຖະກິດ; ແລະ

(2) ຊັບພະຍາກອນມະນຸດເພື່ອການພັດທະນາແບບຍືນຍົງ.

**ບັນດາແຂກທີ່ມີກຽດ ທ່ານຍິງ ແລະ ທ່ານຊາຍ,**

ການກະກຽມ ກອງປະຊຸມໂຕະມົນໃນປີນີ້ ໄດ້ຮັບການຊີ້ນໍາ-ນໍາພາຢ່າງໃກ້ຊິດ ຈາກຄະນະຊີ້ນໍາລະດັບຊາດກ່ຽວກັບຂະບວນການໂຕະມົນກໍຄື ພະນະທ່ານນາຍົກລັດຖະມົນຕີຂອງ ພວກເຮົາ ໃນນາມປະທານຄະນະຊີ້ນໍາລະດັບຊາດ.

ກະຊວງ ແຜນການ ແລະ ການລົງທຶນ ໂດຍໄດ້ຮັບການສະໜັບສະໜູນ ຈາກຫ້ອງການຜູ້ປະສານງານ ອົງການສະຫະປະຊາຊາດ ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ ໂດຍໄດ້ເຮັດວຽກຮ່ວມກັນຢ່າງໃກ້ຊິດ ກັບທຸກໆໜ່ວຍງານຂະແໜງການ, ບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ໃນການກະກຽມກອງປະຊຸມໂຕະມົນໃນປີນີ້.

ຂ້າພະເຈົ້າ ໃນນາມຕາງໜ້າ ໃຫ້ລັດຖະບານ ແຫ່ງ ສປປ ລາວ ກໍ່ຄືຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ, ມີຄວາມເຊື່ອໝັ້ນເປັນຢ່າງຍິ່ງວ່າກອງປະຊຸມໂຕະມົນປະຈໍາປີ 2023 ຈະປະສົບຜົນສໍາເລັດ ແລະ ໄດ້ຮັບໝາກຜົນຢ່າງຈົບງາມ. ຂ້າພະເຈົ້າຫວັງວ່າ ທຸກພາກສ່ວນ ຈະເຂົ້າຮ່ວມກອງປະຊຸມດັ່ງກ່າວ ຢ່າງຕັ້ງໜ້າ ແລະ ປະກອບສ່ວນແລກປ່ຽນຄໍາຄິດເຫັນ ໃນດ້ານນະໂຍບາຍ ແລະ ສະໜັບສະໜູນ ຊັບພະຍາກອນຕ່າງໆ ທີ່ຈໍາເປັນ ເພື່ອຊຸກຍູ້ເຂົ້າໃນການຈັດຕັ້ງປະຕິບັດວາລະການພັດທະນາແຫ່ງຊາດ ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີປະສິດທິພາບ ປະສິດທິຜົນສູງ.

ທ້າຍສຸດນີ້, ຂ້າພະເຈົ້າຂໍຂອບໃຈ ທຸກໆທ່ານ ທີ່ເຂົ້າຮ່ວມ ແລະ ຜູ້ທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມ ໃນມື້ນີ້ ສໍາລັບການປະກອບສ່ວນ ອັນສໍາຄັນໃນທຸກວຽກງານ ເພື່ອເຮັດໃຫ້ຂະບວນການໂຕະມົນ ຂອງພວກເຮົາປະສົບຜົນສໍາເລັດ.

ຂໍຂອບໃຈ.